 

## ກອງປະຊຸມລາຍງານຜົນການປະຕິບັດວຽກງານ ແລະ ຝຶກອົບຮົມ ວິຊາຄູໃຫ້ແກ່ຄູສັນຍາຈ້າງ

ໃນວັນທີ 27 ມິຖຸນາ 2011 ທີ່ສູນພັດທະນາອາຊີວະສຶກສາ ໄດ້ຈັດກອງປະຊຸມ ລາຍງານຜົນການປະຕິບັດວຽກງານ ແລະ ຝຶກອົບຮົມວິຊາຄູໃຫ້ແກ່ຄູສັນຍາຈ້າງ ຂອງ DED ທີ່ປະຈຳຢູ່ໂຮງຮຽນ ເຕັກນິກ-ວິຊາຊີບ ແບບປະສົມ ພາກເໜືອ ແລະ ໂຮງຮຽນ ວິຊາຊີບ ແບບປະສົມ ພາກໃຕ້ ຊຶ່ງໄດ້ຈັດຕັ້ງປະຕິບັດ ແຕ່ວັນທີ 27 ເຖິງ ວັນທີ 30 ມິຖຸນາ 2011 ໃຊ້ເວລາ 04 ວັນ ກອງປຸຊຸມໄດ້ຮັບການສະໜັບສະໜູນດ້ານງົບປະມານ ຈາກອົງການຮ່ວມມືສາກົນ GTZ ໂດຍການໃຫ້ກຽດເຂົ້າຮ່ວມເປັນປະທານໃນພິທີເປີດ ຂອງທ່ານ ໜູພັນ ອຸດສາ ຜູ້ຮັກສາການແທນ ຫົວໜ້າກົມອາຊີວະສຶກສາ ແລະ ເປັນກຽດເຂົ້າຮ່ວມພິທີເປີດກອງປະຊຸມສຳມະນາຄັ້ງນີ້ ມີທ່ານ ສຸລິຄຳກອນ ສີສຸລາດ ຜູ້ອຳນວຍການສູນພັດທະນາອາຊີວະສຶກສາ ທັງເປັນຮອງປະທານກອງປະຊຸມ, ທ່ານ ໂວບກັງ ກາເປີຕິ Program Manager ຈາກອົງການຮ່ວມມືສາກົນ GTZ ແລະ ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກພັດທະນາບຸກຄະລາກອນ ກົມອາຊີວະສຶກສາ. ມີສຳມະນາກອນເຂົ້າຮ່ວມທັງໝົດ ຈຳນວນ: 17 ທ່ານ ຍິງ 1 ທ່ານ ດັ່ງລາຍລະອຽດລຸ່ມນີ້:

- ມາຈາກ ໂຮງຮຽນ ເຕັກນິກ-ວິຊາຊີບ ແບບປະສົມ ພາກເໜືອ 11 ທ່ານ
- ມາຈາກ ໂຮງຮຽນ ເຕັກນິກ-ວິຊາຊີບ ພາກກາງ ແລະ ພາກໃຕ້ 04 ທ່ານ
- ມາຈາກ ສູນສ້າງຄວາມສາມາດ ສະມາຄົມເຟີນິເຈີລາວ 01 ທ່ານ
- ມາຈາກ ຫ້ອງການອົງການຮ່ວມມືສາກົນ GTZ 01 ທ່ານ

- ວິທະຍາກອນ 01 ທ່ານ ຈາກສູນພັດທະນາອາຊີວະສຶກສາ (ທ່ານ ອາຈານ ບຸນສອນ ນະຊຽງຄຳ ຮອງຜູ້ອຳນວຍການ ສູນພັດທະນາອາຊີວະສຶກສາ)

ຈຸດປະສົງ ຂອງກອງປະຊຸມ ແມ່ນເພື່ອເປັນການປະເມີນຜົນງານການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ ຕາມຄວາມຮັບຜິດຊອບບົນສັນຍາວ່າຈ້າງ ລະຫວ່າງຄູສັນຍາຈ້າງ ກັບອົງການພັດທະນາເຢຍລະມັນ (DED) ໃນເມື່ອກ່ອນ ແລະ ເພື່ອເລືອກເຟັ້ນຜູ້ທີ່ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານໃນຜ່ານມາ ຊຶ່ງຈະຖືກພິຈາລະນາບັນຈຸເຂົ້າເປັນລັດຖະກອນລັດ ພາຍຫຼັງການສິ້ນສຸດສັນຍາວ່າຈ້າງໃນເດືອນທັນວາ / 2011 ນີ້.